# ໂຕະໂຕະຈັງ



## ນາງນ້ອຍຂ້າງປ່ອງຢ້ຽມ


ແຕ່ງ ຄຶໂຣຢານາງິ ເຕັດຊຶໂກະ

ແປ ດວງເດືອນ ບຸນຍາວົງ

# ໂຕ໊ະ ໂຕະ ຈັງ

## ນາງນ້ອຍຂ້າງປ່ອງຢ້ຽມ




ໂດຍ : **ຄຶໂຣຍານາງິ ເຕັດຊືໂກະ**



ຈັດພິມ: ສະມາຄົມສົ່ງປຶ້ມຮູບໃຫ້ເດັກນ້ອຍລາວ ແຫ່ງຍີ່ປຸ່ນ (A S P B)

ແລະ ຫໍສະຫມຸດແຫ່ງຊາດ

ອຸປະກໍາ : ສາດສະດາຈານ ອິຊິຮະຣາ ຊິຊູໂກະ,

ມະຫາວິທະຍາໄລ ວາໂກະ ໂຕກຽວ

**Professor ISHIHARA Shizuku**

**WAKO University, Tokyo**

ວຽງຈັນ, ສ.ປ.ປ.ລາວ 1999

# ໂຕະ ໂຕະ ຈັງ *Totto-chan, the Little Girl*

ນາງນ້ອຍ ຂ້າງປ່ອງຢ້ຽມ ***at the window***

***ຄຶໂຣຢານາງິ ເຕັດຊຶໂກະ*** *KUROYANAGI Tetsuko* ຂຽນ

**ດວງເດືອນ ບຸນຍາວົງ** ແປ

ຕົ້ນສະບັບພາສາອັງກິດ **Dorothy Britton**

ຕົ້ນສະບັບພາສາໄທ **ຜຸດສະດີ ນາວາວິຈິດ**

ຮູບໜ້າປົກ-ປະກອບ ອິວາຊາກິ ຊິຮິໂຣ Iwasaki Chihiro

ອອກແບບໜ້າປົກ ຫ້ອງການສະມາຄົມ ທີ່ໂຕກຽວ

ພິມດີດຈັດໜ້າ ວິຣະສິງ ວິຣະວົງ, ມາລີ ທອງທຸມມາ

ຕາມ ທບ 01/ພທປ 040799

ຈຳນວນພິມ 4.400 ຫົວ

ພິມທີ່ ເຄ-ເອັສ ການພິມ ໂທ : 22 2759

ພິມຄັ້ງທີ I ມິຖຸນາ 1999

ສະຫງວນລິຂະສິດ **ດວງເດືອນ ບຸນຍາວົງ**

ຫໍສະໝຸດແຫ່ງຊາດ - ສະມາຄົມສົ່ງປຶ້ມຮູບໃຫ້ເດັກນ້ອຍລາວ ແຫ່ງຍີ່ປຸ່ນ

ສະມາຄົມສົ່ງປຶ້ມຮູບໃຫ້ເດັກນ້ອຍລາວ ແຫ່ງຍີ່ປຸ່ນ

ໂຄງການພິມເລື່ອງສຳລັບເດັກ

Sponsored by
ASSOCIATION FOR SENDING PICTURE BOOKS
TO LAO CHILDREN OF JAPAN
A.S.P.B.

# ຄຳອຸທິດ

ຂໍອຸທິດເລື່ອງລາວຕໍ່ໄປນີ້ ໃຫ້ແກ່ຄູ ***ໂຄບາຍາຊິ ໂຊຊາກຸ*** ຜູ້ລ່ວງລັບໄປແລ້ວ

ເປັນເລື່ອງຈິງ ທີ່ເກີດຂຶ້ນ ໃນໂຮງຮຽນປະຖົມສຶກສາແຫ່ງໜຶ່ງໃນນະຄອນໂຕກຽວ ແລະ ນາງນ້ອຍຄົນໜຶ່ງ ກໍໄດ້ນັ່ງຮຽນຢູ່ ໃນໂຮງຮຽນນີ້ແທ້ ໃນລະຫວ່າງກ່ອນໜ້າສົງຄາມໂລກຄັ້ງທີສອງ ຈະຍຸຕິລົງບໍ່ດົນ



## ສາລະບານ


| | ໜ້າ |
|---|---|
| 1. ສະກຸານນິລົດໄຟບ່ອນທຳອິດ | 1 |
| 2. ນາງນ້ອຍອ້າງປ່ອງຢ້ຽມ | 4 |
| 3. ໂຮງຮຽນໃໝ່ | 12 |
| 4. ມັກຂະໜາດເລີຍ | 13 |
| 5. ຫົວໜ້າໂຮງຮຽນ (ທ່ານຄູ ) | 16 |
| 6. ຄາບເຂົ້າທ່ຽງ | 21 |
| 7. ໂຕ໊ະ ໂຕະ ຈັງ ໄປໂຮງຮຽນໃໝ່ | 23 |
| 8. ຫ້ອງຮຽນເທິງຕູ້ລົດໄຟ | 27 |
| 9. ບົດຮຽນຢູ່ໂຮງຮຽນໂທໂມເອ | 29 |
| 10. ອາຫານຈາກນໍ້າ (ທະເລ ) ແລະ ອາຫານຈາກປ່າ | 33 |
| 11. ຫຍໍ້າໃຫ້ແຫລກ | 38 |
| 12. ຍ່າງຫລິ້ນ | 40 |
| 13. ເພງປະຈຳໂຮງຮຽນ | 45 |
| 14. ມ້ຽນເຂົ້າບ່ອນໃຫ້ຮຽບຮ້ອຍເດີ້ ! | 50 |
| 15. ກ່ຽວກັບຊື່ ໂຕ໊ະ ໂຕະ ຈັງ | 55 |
| 16. ລາຍການຕະຫລົກທາງວິທະຍຸ | 57 |
| 17. ຕູ້ລົດໄຟມາ | 58 |
| 18. ສະລອຍນໍ້າ | 63 |
| 19. ປື້ມບັນທຶກ | 67 |
| 20. ພັກພາກຮຽນຍາມຮ້ອນ | 69 |
| 21. ການຜະຈົນໄພໃຫຍ່ | 72 |

22. ພິສູດຄວາມກ້າຫານ 78
23. ຫ້ອງຊ້ອມເພງ 82
24. ໄປຫ່ຽວບໍ່ນ້ຳຮ້ອນ 86
25. ແອບກາຍຕາມຈັງຫວະ 92
26. ລູກຢາກໄດ້ອັນນີ້ອັນດຽວ 98
27. ເສື້ອໂຕເກົ່າທີ່ສຸດ 102
28. ທ້າວນ້ອຍ ທາກາຣາຊິ 106
29. ຢ່າຟ້າວໂດດ 110
30. ບາດແລ້ວ...ເອີ້ 113
31. ພວກເຮົາຢອກກັບຊື່ໆ 118
32. ວັນກິລາ 122
33. ອິດສະ ໂຄບາຍາຊິ 130
34. ເລື່ອງເລີກລັບ 133
35. ເອົາມືເວົ້າ 138
36. ວັດເຊັງງຸຊຸຈິ 140
37. ມາຊາວຈາງ 143
38. ຜົມເປຍ 146
39. "ແທ່ງຄົ້ວ" 151
40. ຕູ້ລົດຫ້ອງສະຫມຸດ 154
41. ມີຫາງຫລືບໍ່ 158
42. ໂທໂມເອ ປີທີສອງ 162
43. ບາເລ່ ເລື່ອງ ທນອງບາງທີງ 165
44. ຄູພໍ່ນາ 169
45. ແຕ່ງຢູ່ຄົວກິນ 173

46. ຫລາບຄຳຮູ້ເດີ້ ! 180
47. ຂ້ອຍບໍ່ເອົາກັບເຈົ້າດອກ 183
48.ໂຮງຮຽນຂີ້ຮ້າຍ 185
49. ແພຣັດຜົມ 189
50. ໄປຢາມທະຫານບາດເຈັບ 193
51. ເປືອກໄມ້ທວາຍສຸຂະພາບ 198
52. ຄົນເກົ່າງພາສາອັງກິດ 205
53. ລະຄອນໂຮງຮຽນ 209
54. ຮຽນດ້ວຍສໍຂາວ 213
55. ຍາສີ ອາກິຈັງ ຈາກໄປ 216
56. ສອດແບນ 220
57. ໄວໂອລິນຂອງພໍ່ 223
58. ຄຳໝັ້ນສັນຍາ 226
59. ຮັອກກີ້ ບໍ່ເຫັນ 229
60. ພິທີລ້ຽງນ້ຳຊາ 234
61. ຊາໂຍ ບາຣະ ລາກ່ອນ 239

# ຄວາມເຫັນ

ປຶ້ມເລື່ອງ **"ໂຕະ ໂຕະ ຈັງ ນາງນ້ອຍຂ້າງປ່ອງຢ້ຽມ"** ທີ່ ອາຈານ **ດວງເດືອນ ບຸນຍາວົງ** ໄດ້ແປຈາກຕົ້ນສະບັບພາສາໄທ ແລະ ອັງກິດ ເຫລັ້ມນີ້ ເປັນຜົນງານ ອັນລືຊື່ຂອງຍີ່ປຸ່ນ ແລະ ຢູ່ໃນໂລກ ເພາະໄດ້ຮັບການແປ ແລະ ພິມແລ້ວພິມອີກ ຈຳໜ່າຍເປັນກວ່າສິບລ້ານຫົວພາຍໃນລະຍະພຽງ 5 ປີ. ສ່ວນຢູ່ປະເທດໄທ ໄດ້ຈັດພິມມາແລ້ວບໍ່ຕ່ຳກວ່າ 10 ເທື່ອ. ຍ້ອນວ່າເປັນ ປຶ້ມທີ່ເລົ່າເຖິງປະສົບການໄວເດັກປະກົມຕົ້ນ ຂອງແມ່ຍິງຄົນໜຶ່ງ ຊຶ່ງຕໍ່ມາເຕີບໃຫຍ່ເປັນ ນັກສະແດງ ສິລະປິນ ແລະ ນັກຂຽນເລື່ອງສຳລັບເດັກ ທີ່ໃຫ້ ຄຸນຄ່າຕໍ່ການສຶກສາ ຈົນໄດ້ຮັບກຽດ ເປັນທູດພິເສດ ຂອງອົງການອຸຍນິເຊຟ ( UNICEF ).

ປຶ້ມດີໆ ສຳລັບເດັກນ້ອຍ, ພໍ່ແມ່ ແລະ ຄູ ມີບໍ່ຫລາຍ ແລະ ນັກຂຽນລາວ ກໍຍັງບໍ່ມີບົດຮຽນຫລາຍໃນເລື່ອງນີ້ **ຫໍສະໝຸດແຫ່ງຊາດ** ຂໍຂອບໃຈສະມາຄົມ ແລະ ສາສະດາຈານ **ອິຊິຣະຣາ ຊິຊຸໂກະ** ທີ່ໃຫ້ທຶນ ສຳລັບການຈັດພິມຄັ້ງນີ້ . ຫວັງວ່າ ບໍ່ພຽງແຕ່ຄູ ພໍ່ແມ່ ແລະ ເດັກນ້ອຍ ທັງຫລາຍຈະໄດ້ອ່ານ ໄດ້ບົດຮຽນ ຈາກເນື້ອເລື່ອງ ຊຶ່ງເປັນເຫດການຈິງແທ້ເທົ່ານັ້ນ ແຕ່ຍັງຈະໃຫ້ບົດຮຽນດ້ານ ການຂຽນບັນທຶກ ແກ່ນັກຂຽນຫລືຜູ້ມັກຢາກຈະຂຽນເລື່ອງ ກ່ຽວກັບເດັກນ້ອຍ ນຳອີກ

ຂໍໃຫ້ມີຄວາມສຸກນຳການອ່ານ ແລະ ການກາຍທອດດ້ວຍ.

ວຽງຈັນ, ມິຖຸນາ 1999

ກິງເດືອນ ເນດຕະວົງ

ຫົວໜ້າໂຄງການສົ່ງເສີມການອ່ານ

# ຈາກໃຈຜູ້ແປ

ຂ້າພະເຈົ້າຄອງຄອຍທີ່ຈະເຫັນປື້ມເລື່ອງນີ້ ໄດ້ຮັບການຈັດພິມເປັນເຫລັ້ມສົມບູນຢ່າງນີ້ ມາເປັນເວລາເກືອບສິບປີ ຄືຫລັງຈາກໄດ້ລົງພິມເປັນຕອນໆ ຢູ່ໃນວັນນະສິນ ລະຫວ່າງປີ 1990-92, ການໄດ້ພິມເປັນເຫລັ້ມ ຫມາຍເຖິງວ່າຜູ້ອ່ານ ຈະສາມາດເລືອກ ອ່ານບົດໃດບົດຫນຶ່ງ ຫລື ອ່ານທົບທວນຫລາຍຄັ້ງ, ອ່ານສູ່ກັນຟັງ ຫລື ອ່ານຜູ້ດຽວກໍໄດ້. ຂ້າພະເຈົ້າເອງ ຍິ່ງອ່ານກໍຍິ່ງຕິດໃຈ ເຫັນວ່າເນື້ອໃນ ສິລະປະການຂຽນທຸກຢ່າງເປັນບົດຮຽນອັນປະເສີດ ສຳລັບຜູ້ເປັນພໍ່ແມ່ ຄູສອນ ນັກກິດຈະກຳຕະຫລອດຮອດຜູ້ມັກການປະພັນ ທີ່ອາດເລີ່ມຕົ້ນດ້ວຍການຂຽນບົດບັນທຶກຊີວິດຂອງຕົນ ຄວາມຊົງຈຳໄວເດັກ ຫລື ຂອງຄົນອື່ນໆ. ໃນເລື່ອງນີ້ ນອກຈາກຜູ້ ອ່ານຈະໄດ້ມ່ວນຕື່ນເຕັ້ນໄປນຳການຜະຈົນໄພຂອງ ນາງນ້ອຍ ໂຕ໊ະ ໂຕະ ຈັງ ແລ້ວ ທ່ານຍັງຈະໄດ້ສຳຜັດບັນຍາກາດ ວັດທະນະທຳ ການຢູ່ກິນ ມາລະຍາດ ຂອງຊາວຍີ່ປຸ່ນ ແລະສະພາບຂອງປະຊາຊົນປະເທດນີ້ ໃນລະຍະກ່ອນສົງຄາມນຳ ແລະ ສຳຄັນສຸດແມ່ນວິທີສ້າງຄວາມສຸກສະບາຍໃຈ ໃຫ້ເດັກນ້ອຍແບບງ່າຍໆ ແລະ ການກ່າຍທອດ ຫລື ຫລໍ່ຫລອມ ໃຫ້ເດັກ ມີຈິດໃຈເອື້ອເຟື້ອເຜື່ອແຜ່, ບໍ່ເປັນຄົນເຫັນແກ່ໂຕເອົາປຽບຫມູ່, ຮູ້ຈັກເສັຽສະຫລະ ແລະ ມີຫົວຄິດສ້າງສັນ ຫາວິທີແກ້ບັນຫາໄດ້ເອງ ຊຶ່ງທັງຫມົດ ເຫລົ່ານີ້ ລ້ວນແຕ່ເປັນປັດໄຈຫລັກ ໃນການສ້າງຊັບພະຍາກອນມະນຸດ ທີ່ມີສິນທຳຈັນຍາທຳ ເປັນອົງປະກອບຫນຶ່ງ ຂອງຂະບວນການສັນຕິພາບ ຢູ່ບົນຜືນພິພົບນີ້.

ຂ້າພະເຈົ້າແປເລື່ອງນີ້ ຈາກຕົ້ນສະບັບພາສາໄທ ສຳນັກພິມ ຜີເສື້ອຂອງ ອາຈານ **ຜຸດສະດີ ນາວາວິຈິດ** ຊຶ່ງມີຄວາມຊ່ຽວຊານດ້ານວັດທະນະທຳແລະ ວັນນະຄະດີຍີ່ປຸ່ນ ແລະ ຕົ້ນສະບັບພາສາອັງກິດ ຂອງ **ດໍ ໂຣ ທີ ໄບຣເຕັ້ນ**

ຊຶ່ງຮູ້ພາສາຍີ່ປຸ່ນດີ ທັງເປັນນັກກະວີ ນອກນີ້ ນາງ ຈັນທະສອນ ອິນທະວົງ ປະທານ ສະມາຄົມສົ່ງປຶ້ມຮູບໃຫ້ເດັກນ້ອຍລາວ ແຫ່ງຍີ່ປຸ່ນ ໄດ້ອ່ານກວດການ ສະກົດຄຳນາມສະເພາະ ເພື່ອໃຫ້ຜູ້ອ່ານລາວອອກສຽງ ໃຫ້ໄດ້ໃກ້ກັບສຽງ ຂອງຄຳຍີ່ປຸ່ນອີກ.

ໃນນາມຜູ້ແປ ແລະ ຜູ້ອ່ານ ຂ້າພະເຈົ້າຮູ້ສຶກເປັນບຸນຄຸນຢ່າງລົ້ນເຫລືອ ທີ່ທາງສະມາຄົມສົ່ງປຶ້ມຮູບໃຫ້ເດັກນ້ອຍລາວ ແຫ່ງປະເທດຍີ່ປຸ່ນ A.S.P.B ແລະອາຈານ ອິຊິຮະຣາ ຊິຊູໂກະ (Professor ISHIHARA Shizuko) ທີ່ບໍລິຈາກທຶນຮອນກ້ອນພິເສດ ໃຫ້ມາຈັດພິມປຶ້ມເລື່ອງນີ້ຢູ່ໃນ ສ.ປ.ປ.ລາວ ຂອງເຮົາ ນັບວ່າເປັນຂອງຂວັນອັນລ້ຳຄ່າ ແກ່ທັງພໍ່ແມ່ ຜູ້ປົກຄອງເດັກນັກ ກິດຈະກຳຕະຫລອດກະໂຕເດັກ ເອງ ແລະ ມັນກໍແມ່ນຂອງຂວັນ ທີ່ມີລັກສະ ນະກາລະນານ ທີ່ຈະອອກຫນໍ່ແຫນງແຜ່ຂະຫຍາຍໄດ້ ດ້ວຍບົດຮຽນທີ່ຈະ ຖ່າຍທອດຕໍ່ ແລະ ນຳໄປປະຕິບັດໄດ້ ຢູ່ໃນຫລາຍທີ່ຫລາຍແຫ່ງນັ້ນເອງ. ນອກ ຈາກນີ້ ມັນຍັງແມ່ນທາງເສັ້ນຫນຶ່ງ ທີ່ຈະພາພວກເຮົາໄປຮູ້ຈັກວັນນະຄະດີ ອັນຍອດຍ້ຽມເລື່ອງຫນຶ່ງຂອງໂລກນຳອີກ, ທ້າຍສຸດນີ້ ຂໍຂອບໃຈ**ນາງ ຄິໂຮຢາ ນາງິ ເຕັດຊືໂກະ** ແທນເດັກນ້ອຍລາວທຸກຄົນ, ທ່ານ **ຜຸດສະດີ ນາວາວິຈິດ** ແລະ **ດໍໂຣທີ ໄບຣເຕີ້ນ** ທີ່ອະນຸຍາດໃຫ້ໃຊ້ຕົ້ນສະບັບ ຢ່າງບໍ່ຄິດຄ່າລິຂະສິດ. ຫວັງວ່າ ພວກເຮົາຈະໄດ້ພົບກັນອີກ ບົນເສັ້ນສ້າງອັນຜາສຸກ ແຫ່ງການສ້າງ ສັນຜົນງານເພື່ອອຸດົມການດຽວກັນ.

ວຽງຈັນ, ພຶດສະພາ 1999

ດວງເດືອນ ບຸນຍາວົງ

# ຮູ້ຈັກຜູ້ຂຽນ

ບາງ *ຄືໂຣຍາບາງ ເຕັດຊືໂກະ* ເກີດທີ່ນະຄອນໂຕກຽວ ປະເທດ ຍີ່ປຸ່ນ ໃນຊຸມຕົ້ນປີ 1930. ເຂົ້າຮຽນຫ້ອງ ປ.1 ໄດ້ບໍ່ເທົ່າໃດມື້ ກໍຖືກ ໄລ່ອອກ, ແມ່ຈຶ່ງພາໄປເຂົ້າໂຮງຮຽນໃຫມ່ ທີ່ມີລະບົບສອນ ແຕກຕ່າງກັບ ໂຮງຮຽນອື່ນ (ລາຍລະອຽດເຊີນອ່ານໃນປຶ້ມ). ເປັນລູກສາວນັກໄວໂອລິນ ຊື່ດັງ ຂອງ ວົງດຸລິຍາງ ບັນເລງປະຈຳໃຫ້ ສະຖານີວິທະຍຸໂທລະພາບຍີ່ປຸ່ນ ( **Japan Broadcasting Corporation/NHK** ) ເມື່ອຮຽນສຳເລັດ ວິທະຍາໄລການດົນຕີ ແລ້ວກໍເຂົ້າເປັນພະນັກງານເຝິກຫັດ ດ້ານການສະແດງ ຂອງສະຖານີວິທະຍຸໂທລະພາບ, ເລີ່ມຕົ້ນດ້ວຍການຫລິ້ນລະຄອນວິທະຍຸ ສຳຫລັບເດັກນ້ອຍ ແລະ ສະແດງເປັນຕົວປະກອບລະຄອນໂທລະທັດ, ຕໍ່ມາ ກາຍເປັນນັກສະແດງຍິງ ທີ່ຊາວຍີ່ປຸ່ນນິຍົມຊົມຊອບ ຕິດຕໍ່ກັນມາເປັນເວລາ ຫລາຍສິບປີ ( ນັບແຕ່ຕົ້ນຊຸມປີ 50 ເຖິງປັດຈຸບັນ), ເປັນນັກສະແດງ ຍິງຜູ້ມີ ລາຍຮັບສູງ ແລະ ອຸທິດຕົນ ໃຫ້ແກ່ວຽກງານສັງຄົມສົງເຄາະ ເຊັ່ນຊ່ອຍເຫລືອ ຄົນພິການ (ສ້າງຕັ້ງຄະນະລະຄອນຫູຫນວກ ປາກກືກ) ແລະ ເດັກນ້ອຍ ທີ່ປະສົບກັບຄວາມຫຍຸ້ງຍາກຢູ່ໃນທົ່ວໂລກ, ໄດ້ ຮັບລາງວັນດ້ານການສະແດງ ແລະ ລາຍການດີເດັ່ນປະເພດຕ່າງໆ ຢ່າງຫລວງຫລາຍ ເຊັ່ນ ລາຍການສົນ ທະນາປະຈຳວັນທາງໂທລະພາບ ຊື່ "ຫ້ອງຂອງເຕັດຊືໂກະ" ຊຶ່ງຈັດມາແຕ່ປີ 1976, "ສິ່ງມະຫັດສະຈັນ ຂອງໂລກ" ແລະ ອື່ນໆ.

ນອກຈາກເປັນນັກສະແດງ ທີ່ມີຜົນງານຕໍ່ເນື່ອງກັນຫລາຍທົດສະວັດ ແລ້ວ ບາງ ***ຄືໂຣຍານາງິ ເຕັກຊືໂກະ*** ຍັງເປັນນັກຂຽນ ທີ່ປະສົບຄວາມສຳເລັດ ຢ່າງຄາດບໍ່ເຖິງອີກ, ຜົນງານດ້ານການປະພັນເລື່ອງທຳອິດຊື່ ***"ໂຕ໊ະ ໂຕະ ຈັງ ນາງນ້ອຍຂ້າງປ່ອງຢ້ຽມ"*** ພິມອອກໃນປີ 1981 ຈຳ ຫນ່າຍໄດ້ເຈັດ ລ້ານກວ່າ

ເຫລັ້ມ ຊຶ່ງເປັນຕົວເລກທຳລາຍສະຖິຕິຈຳນວນປຶ້ມຂາຍດີໃນຍີ່ປຸ່ນ. ຫລັງຈາກແປເປັນພາ ສາອັງກິດໃນປີ 1982 ແລະ ພິມຈຳຫນ່າຍໄດ້ດີ ຢູ່ໃນຍີ່ປຸ່ນເອງແລ້ວປຶ້ມເລື່ອງນີ້ ກໍໄດ້ຮັບຄວາມສົນໃຈ ຢ່າງຫລວງຫລາຍ, ປັດຈຸບັນມີການພິມຈຳຫນ່າຍເປັນພາສາຕ່າງໆ ຢູ່ໃນສາມສິບກວ່າປະເທດ ໃນນັ້ນມີສະຫະລັດອາເມລິກາ, ອັງກິດ, ລັດເຊຍ, ຈີນ, ເອຢິບ, ອິນເດຍ, ໄທ ( ປະເທດທີສາມສິບສີ່ອາດແມ່ນພາສາລາວ.) "ໂຕະ ໂຕະ ຈັງ ນາງນ້ອຍຂ້າງປ່ອງຢ້ຽມ" ເປັນນິຍາຍ ເຊີງອັດຕະຊີວະປະຫວັດຂອງຜູ້ຂຽນ ເມື່ອຄາວເປັນນັກຮຽນໄວປະຖົມຕົ້ນທີ່ສອດແຊກຈິດຕະສາດເດັກ ແລະ ໃຫ້ບົດຮຽນແກ່ພໍ່ແມ່ ຄູສອນ ແບບຢ່າງງ່າຍໆ ນຳໃຊ້ໄດ້ ກັບເດັກນ້ອຍທຸກຊາດ ທຸກພາສາໃນໂລກ. ຍ້ອນເນື້ອເລື່ອງກ່ຽວຂ້ອງ ກັບຈິດຕະສາດເດັກ ແລະ ສິລະປະການຂຽນແບບງ່າຍດາຍເຮັດໃຫ້ວັນນະຄະດີເລື່ອງນີ້ ປະສົບຄວາມສຳເລັດໃນລະດັບສາກົນ. ໃນປີ 1984 ນາງ ***ຄຶໂຣຍານາງິ ເຕັດຊຶໂກະ*** ໄດ້ຮັບແຕ່ງຕັ້ງເປັນທູດສັນຖະວະໄມຕີ **(UNICEF Goodwill Ambassador)** ຄົນທີສີ່ຂອງ **ກອງທຶນສະຫະປະຊາຊາດ ເພື່ອແມ່ ແລະ ເດັກ** ( **UNICEF** ) ແລະ ເປັນທູດສັນຖະວະໄມຕີຂອງ ອົງການສະຫະປະຊາຊົນພຽງຄົນດຽວ ຈາກທະວີບເອເຊັຽ. ຫນ້າທີ່ຕົ້ນຕໍຂອງທູດສັນຖະວະໄມຕີ ແມ່ນການລະດົມຂົນຂວາຍທຶນ ມາດຳເນີນກິດຈະກຳ ຕາມໂຄງການຂອງອົງການ ເພື່ອຊ່ອຍເຫລືອເດັກທີ່ປະສົບຄວາມລຳບາກໃນທົ່ວໂລກ. ນັບແຕ່ຢູ່ໃນຕຳແຫນ່ງນີ້ມາ ທຸກໆປີ ນາງ ***ຄຶໂຣຍານາງິ ເຕັດຊຶໂກະ*** ຈະເດີນທາງໄປຢ້ຽມຢາມເດັກນ້ອຍໃນປະເທດ ທີ່ພວມມີບັນຫາ ແລະ ຕ້ອງການຄວາມຊ່ອຍເຫລືອຢ່າງຮີບດ່ວນ. ມາເຖິງປັດຈຸບັນນາງໄດ້ໄປຢ້ຽມຢາມ 15 ປະເທດ ທັງອາຟຣິກກາ ອາຊີ ແລະ ຢູລົບຕາເວັນຕົກ ໂດຍມີນັກຂ່າວໂທລະພາບ ວິທະຍຸ ຫນັງສືພິມ ຕິດຕາມເປັນຂະບວນໃຫຍ່ ຫລັງຈາກນັ້ນ ທ່ານກໍນຳເອົາສະພາບຄວາມທຸກຈົນ ຂັດສົນບັນຫາທີ່ໄດ້ພົບເຫັນມາເຜີຍແຜ່ອອກ ເປັນລາຍການທາງໂທລະພາບ. ທຶນຮອນສຳຄັນຈຳນວນຫນຶ່ງ ໄດ້ຈາກການບໍລິຈາກຂອງຊາວຍີ່ປຸ່ນ ຄົນທຳມະດາສາມັນ ທີ່ຍັງຫນຸ່ມນ້ອຍ ແລະ ອາວຸໂສ ທີ່ຕິດຕາມລາຍການຂອງ

ເພິ່ນ. ແຕ່ລະປີ ທຶນເຫລົ່ານີ້ໄດ້ສົ່ງມອບໃຫ້ ອຸຍນິເຊັບ ເພື່ອນຳໄປໃຊ້ຈ່າຍເຂົ້າໃນກິດຈະກຳຊ່ວຍເຫລືອເດັກໃນປະເທດ ທີ່ເພິ່ນໄປຢ້ຽມຢາມ ເຊັ່ນ ເມື່ອປີ 1988 ທ່ານໄດ້ມາຢ້ຽມຢາມ ປະເທດວຽດນາມ ແລະ ກຳປູຊາ ຫລັງຈາກນັ້ນກໍໄດ້ຮ່ວມມືກັບຈິດຕະກອນ ເຮັດປຶ້ມຮູບ ຊື່ "**ຂໍດອກໄມ້ ແທນ ລະເບີດແດ່**" ຊຶ່ງເປັນເລື່ອງ ກ່ຽວກັບລະເບີດຕົກຄ້າງຝັງດິນອອກຈຳຫນ່າຍ ເພື່ອສະສົມລາຍຮັບໄປດຳເນີນກິດຈະກຳຊ່ວຍເຫລືອເດັກນ້ອຍໃນປະເທດ ທີ່ມີບັນຫາທຳນອງນີ້ ຮ່ວມທັງກຳປູຊານຳ.

ໃນໂອກາດທີ່ພວກຂ້າພະເຈົ້າ (ຄະນະສະມາຄົມ) ໄດ້ເຂົ້າພົບ ເພື່ອຂໍອະນຸຍາດຈັດພິມປຶ້ມເລື່ອງນີ້ເປັນພາສາລາວ ສຳລັບແຈກຢາຍຕາມ ໂຄງການສົ່ງເສີມການອ່ານ ຂອງຫໍສະຫມຸດແຫ່ງຊາດ ນັ້ນ ນາງ ***ເຕັດຊຶໂກະ*** ສະແດງຄວາມດີໃຈ ແລະ ຊົມເຊີຍອຸດົມຄະຕິ ຂອງສະມາຄົມ ທີ່ເຮັດກິດຈະກຳອັນສົ່ງເສີມພັດທະນາການຂອງ ເດັກນ້ອຍໃນ ສ.ປ.ປ.ລາວ ພ້ອມດຽວກັນ ກໍໄດ້ຝາກຄວາມຮັກແພງ ຫ່ວງໃຍ ມາຍັງເດັກນ້ອຍລາວ ທຸກຄົນ ໃນຂະນະດຽວກັນເພິ່ນກໍຝາກບອກກັບຜູ້ເປັນພໍ່ແມ່ ຄູສອນ ນັກກິດຈະກຳເດັກ ທຸກໆຄົນວ່າ ເພິ່ນຈະດີໃຈຫລາຍ ຖ້າຫາກວ່າເນື້ອໃນເລື່ອງລາວ ຂອງ ໂຕ໊ະ ໂຕະ ຈັງ ຈະເປັນປະໂຫຍດໃນການດຳເນີນຊີວິດ ຂອງພວກເຮົາທັງຫມົດ ເຊັ່ນ ຊ່ວຍກະຕຸ້ນໃຫ້ຜູ້ໃຫຍ່ກັບເດັກ ມີຄວາມສຳພັນອັນດີຕໍ່ກັນ ເຂົ້າໃຈກັນ ຜູ້ໃຫຍ່ຮັບຮູ້ຄວາມຕ້ອງການຂອງເດັກ. ພິເສດ ທີ່ຂໍຝາກໃຫ້ແມ່ນຂໍ້ປະຕິບັດງ່າຍໆອັນຫນຶ່ງໃນເວລາຢູ່ກັບເດັກນ້ອຍ ນັ້ນແມ່ນ ການພະຍາຍາມ ເຮັດໃຫ້ເຂົາມີສ່ວນຮ່ວມຢ່າງສະເຫມີພາກ ໂດຍຊັກຊວນ ວ່າ : "**ມາເຮັດ ອັນນີ້ ອັນນັ້ນນຳກັນ**" ແຕ່ບໍ່ແມ່ນອອກຄຳສັ່ງວ່າ "**ມາເຮັດຊ່ວຍແດ່**" ຫລື ບອກຜູ້ນັ້ນ ໄປຊ່ວຍຜູ້ນີ້ຍ້ອນເຫດຜົນບາງຢ່າງ ເຊັ່ນ ໃຫ້ເດັກນ້ອຍປົກກະຕິ ໄປຊ່ວຍເດັກພິການ. ປັດຊະຍາດັ່ງກ່າວ ***ຄືໂຣຢານາງິ ເຕັດຊຶໂກະ*** ຮັບຖ່າຍທອດ ມາຈາກລຸງຄູ ໂຄບາຍາຊິ ຫົວຫນ້າໂຮງຮຽນໂທໂມເອະ ບ່ອນ ***ໂຕ໊ະໂຕະຈັງ*** ຮຽນຢູ່ຊັ້ນ ປ.1 ແລະໄດ້ຊວນ ທ້າວນ້ອຍ ***ອາກິຈັງ*** ຜູ້ເປັນເປ້ຍລ່ອຍ ປີນຂຶ້ນຕົ້ນໄມ້ສູງນຳກັນ. ເດັກທັງສອງອອກແຮງຮ່ວມກັນ ຢ່າງມະຫາສານ ຈຶ່ງປະສົບຄວາມສຳເລັດ.

ບົດຮຽນ ເຮັດນຳກັນ ໃນຄັ້ງນີ້ ຝັງໃຈນາງນ້ອຍມາຕະຫລອດ ແລະ ມັນໄດ້ສອນໃຫ້ ***ເຕັດຊຶໂກະ*** ຊາບຊຶ້ມປັດຊະຍາງ່າຍໆ ອັນນີ້ ນັ້ນກໍແມ່ນເຮັດໃຫ້ເດັກທຸກຄົນ ຮູ້ສຶກວ່າຕົນເອງມີສ່ວນ ຮ່ວມຢ່າງສົມບູນ ໃນທຸກໆຢ່າງ.

ຂໍໃຫ້ເດັກນ້ອຍທຸກຄົນ ຮັບຮູ້ວ່າ ໃນໂລກນີ້ ຍັງມີຄົນ ຄື ***ຄືໂຣຢານາງິ ເຕັດຊຶໂກະ*** ຢູ່ຫລາຍຄົນ, ເຂົາເຈົ້າເປັນຜູ້ອຸທິດຕົນ ເພື່ອເຮັດໃຫ້ເດັກນ້ອຍເປັນຢູ່ຢ່າງຜາສຸກ, ໂດຍສະເພາະ ເດັກນ້ອຍທີ່ຕ້ອງການຄວາມຊ່ອຍເຫລືອ ປະສົບຄວາມລຳບາກ ຢູ່ໃນປະເທດ ທຸກຍາກຂາດເຂີນ ແລະ ມີເສິກສົງຄາມ.



ນັກຂຽນ ແລະ ຜູ້ແປ ໃນໂອກາດພົບພໍ້ກັນ
ກຸມພາ 1999 ທີ່ ສະຖານີ NHK , ໂຕກຽວ

# ສະຖານີລົດໄຟບ່ອນທຳອິດ

ເມື່ອລົງຈາກລົດໄຟສາຍ *"ໂອອິມາຈິ"* ທີ່ສະຖານີ *"ຈິຍຸງະໂອກະ"* ແລ້ວ ແມ່ຈູງມື *ໂຕ໊ະໂຕະຈັງ* ໄປຍັງບ່ອນກວດປີ້. *ໂຕ໊ະໂຕະຈັງ* ບໍ່ໄດ້ໄດ້ຂຶ້ນລົດໄຟເລື້ອຍ ຈຶ່ງບໍ່ຢາກສົ່ງປີ້ທີ່ກຳໄວ້ຢ່າງຫວງແຫນ ໃຫ້ຜູ້ກວດປີ້. ນາງນ້ອຍຖາມຄົນຜູ້ນັ່ງຢູ່ໃນປ່ອງກວດປີ້ວ່າ :

- ຂໍເອົາປີ້ນີ້ໄວ້ ບໍ່ໄດ້ຊັ້ນເບາະ ?

- ບໍ່ໄດ້ດອກ, ຜູ້ກວດປີ້ຕອບ ແລະ ຮັບເອົາປີ້ຈາກມືຂອງໂຕ໊ະ ໂຕະຈັງ

ນາງນ້ອຍຊີ້ມືໄປໃສ່ແອບບັນຈຸປີ້ໃຊ້ແລ້ວຢູ່ເຕັມ

- ປີ້ນີ້ແມ່ນຂອງລຸງຫມົດເລີຍຫວະ ?

- ບໍ່, ບໍ່ແມ່ນຂອງລຸງດອກ ເປັນຂອງສະຖານີ; ລຸງກວດປີ້ຕອບ ທັງຮັບເອົາປີ້ຈາກຄົນໂດຍສາຍອື່ນໆ ທີ່ຍ່າງອອກຈາກສະຖານີ.

- ຊັ້ນຫວາ...

*ໂຕ໊ະໂຕະຈັງ* ຈຶ່ງເບິ່ງປີ້ໃນແອບຢ່າງເສຍດາຍອາໄລ ເວົ້າຂຶ້ນ ວ່າ :

- ຄັນລູກໃຫຍ່ ລູກຊິເປັນຄົນຂາຍປີ້

ລຸງຂາຍປີ້ເສືອດຕາເບິ່ງຫນ້າ *ໂຕ໊ະໂຕະຈັງ* ເປັນເທື່ອທຳອິດ

- ລູກຊາຍຂອງລຸງກໍເວົ້າວ່າ ຢາກມາເຮັດການຢູ່ສະຖານີລົດໄຟຄືກັນ ຫລານມາເຮັດວຽກນຳມັນຕີ້

*ໂຕ໊ະໂຕະຈັງ* ຖອຍຫ່າງອອກມາຫນ້ອຍຫນຶ່ງ ຂຶງຕາເບິ່ງລຸງ ຂາຍປີ້ ລຸງເປັນຄົນອ້ວນໃສ່ແວ່ນຕາ ເບິ່ງຊົງທ່າທາງໃຈດີຢູ່ດອກ.

- ເອີ້..., *ໂຕ໊ະໂຕະຈັງ* ເອົາມືຄ້ຳແອວ ເບິ່ງລຸງຂາຍປີ້ຢ່າງພິຈາລະນາ, - ເຮັດວຽກກັບລູກຊາຍລຸງ ກໍ່ຄືຊິດີຄືກັນ ແຕ່ຊິຄຶດເບິ່ງກ່ອນ ດຽວນີ້ ຫລານບໍ່ຫວ່າງ ຊິຕ້ອງໄປໂຮງຮຽນບ່ອນໃຫມ່.

*ໂຕ໊ະໂຕະຈັງ* ແລ່ນໄປຫາແມ່ ທັງຮ້ອງແຮງໆວ່າ :

- ລູກຢາກເປັນຄົນຂາຍປີ້

- ໃສ່ລູກວ່າຢາກເປັນສອດແນມ...ຊິເຮັດແນວໃດລະ ?

ແມ່ເວົ້າ ບໍ່ຕ່າງໃຈຈັກຫນ້ອຍ

*ໂຕ໊ະໂຕະຈັງ* ປ່ອຍໃຫ້ແມ່ຈູງມືຍ່າງໄປເລື້ອຍໆ ທັງຄຶດວ່າ:

"ເອີ້ ! ແມ່ນໃດເນາະ ເຮົາເຄີຍຄຶດວ່າຊິເປັນສອດແນມມາ ຈົນຮອດ

ມື້ວານນີ້ ແຕ່ວ່າ ມີປີ້ລົດໄຟຢູ່ເຕັມແອບ ມັນກະລັກຢູ່ຄືກັບນ່າ"

- ແມ່ນແລ້ວ ! !

*ໂຕະໂຕະຈັງ* ຄິດອັນໃດອັນໜຶ່ງອອກ - ນາງນ້ອຍແຫງນໜ້າຂຶ້ນເບິ່ງແມ່ ແລະ ເວົ້າໝົດແຮງວ່າ :

- ສົມມຸດວ່າ ເປັນຄົນຂາຍປີ້ ອີ້ແທ້ ແມ່ນສອດແນມລະແມ່ ດີບໍ່ ?

ແມ່ບໍ່ຕອບ ເພາະພວມອຸກໃຈຄິດຫ່ວງວ່າ ກ້າເກີດວ່າ ໂຮງຮຽນທີ່ພວມຈະໄປນີ້ບໍ່ຍອມຮັບ *ໂຕະໂຕະຈັງ* ແລ້ວນາງຈະເຮັດແນວໃດ ໃບໜ້າງາມກ້ອງໝວກຜ້າເນື້ອໜາ ປະດັບດອກໄມ້ນ້ອຍໆ ຂອງແມ່ ຂ້ອນຂ້າງເຄັ່ງຂຶມ.

ແມ່ເບິ່ງ *ໂຕະໂຕະຈັງ* ເຊິ່ງເຕັ້ນຢ໊ອດໆ ໄປຕາມກະໜົບ ແລະເວົ້າແບ໊ບໆ ປານຂະບວນລົດດ່ວນຢູ່ຜູ້ດຽວ ແຕ *ໂຕະໂຕະຈັງ* ບໍ່ຮູ້ຄວາມໃນໃຈຂອງແມ່, ພໍປະສານແສງຕາກັບແມ່ ນາງກໍຍິ້ມອໍເຊາະ ເວົ້າຢ່າງແຈ່ມໃສ :

" ແມ່ ລູກວ່າລູກຊິບໍ່ເປັນແລ້ວລະ, ທັງສອງແນວເລີຍ ລູກຊິເປັນ *ຈິນດ້ອງຍະ* ດີກວ່າ

- ເອີ້, ເອີາເທາະ ມັນຊິສວາຍ, ລູງຄູກໍາລັງກ້າຢູ່ ເຊົາເວົ້າແລ້ວບາດຍ່າງແນມເບິ່ງທາງໜ້າແດ່; ແມ່ເວົ້າຊຶ່ງເກືອບໝົດຫວັງ.

ແນມໄປຂ້າງໜ້າ ເຫັນປະຕູໂຮງຮຽນພໍລິບໆ.



*ກ່ອນ* ຈະມາໂຮງຮຽນໃໝ່ນີ້ ມີເລື່ອງເຮັດໃຫ້ແມ່ຂອງ *ໂຕ໊ະໂຕະຈັງ* ອຸກໜຶກອຸກໃຈ.

*ໂຕ໊ະໂຕະຈັງ* ຖືກໄລ່ອອກຈາກໂຮງຮຽນເກົ່າຂະນະຮຽນຢູ່ ປ.1. ຫ້ອງປະຖົມປີທີໜຶ່ງເທົ່ານັ້ນ !!

ອາທິດແລ້ວນີ້ຄູປະຈຳຫ້ອງເອີ້ນແມ່ໄປຫາ ເພື່ອບອກວ່າ: - ຖ້າລູກຂອງເຈົ້າຍັງຢູ່ນີ້ ມັນຈະລົບກວນເດັກນ້ອຍຜູ້ອື່ນໃນຫ້ອງຮຽນ, ພາມັນໄປຮຽນຢູ່ໂຮງຮຽນອື່ນສາ.

ສາວຄູຜູ້ໜຸ່ມແໜ້ນໜ້າຕາຈົບງາມ ເວົ້າຫລຳໄປຫລຳມາ ທັງທັນໃຈໃຫຍ່ເປັນຮູດໆ : - ມັນໂພດແທ້ໆໃດ໋ !

ແມ່ຕົກໃຈແຮງ ພະຍາຍາມຄຶດວ່າ ລູກຂອງນາງເຮັດຫຍັງແດ່ ອັນຈະເປັນການລົບກວນການຮຽນຂອງໝູ່ຜູ້ອື່ນໆໃນຫ້ອງຮຽນ.

ສາວນາງຄູຫຼັບຕາພິບໆ ຈົນຂົນຕາງອນຕຳກັນ ທາງມີລູບຜົມຕັດສັ້ນ ແລະເລີ່ມຕົ້ນອະທິບາຍ :

- ເວລາຮຽນມັນໄຂມັນອັດຝາໂຕ໊ະ ເປັນຮ້ອຍໆເທື່ອພຸ້ນນ່າ ພໍຂ້ອຍບອກວ່າ “ ຖ້າບໍ່ມີຫຍັງຢ່າໄຂ ຫຼື ອັດຝາໂຕ໊ະ ” ລູກສາວຂອງເຈົ້າ ຈະຈົກເອົາເຄື່ອງໃຊ້ທຸກແນວ ຕັ້ງແຕ່ ປຶ້ມຂຽນ ແອບສໍ ແລະປຶ້ມອ່ານທີ່ຢູ່ໃນໂຕ໊ະ ອອກມາເທື່ອລະອັນ, ສົມມຸດວ່າ ຊິເຮັດຂຽນທວາຍ ລູກເຈົ້າຊິໄຂຝາໂຕ໊ະ ຈົກເອົາປຶ້ມຂຽນອອກມາ ອັດຝາໂຕ໊ະກົ໊ກ! ຂຽນຄຳວ່າ ກາ ລົງໃສ່ປຶ້ມ ພໍຂຽນບໍ່ງາມ ຫລືຂຽນຜິດ ມັນຈະໄຂຝາໂຕ໊ະ ຫລຸບຫົວລົງໄປ ຢິບເອົາຢາງລຶບ ອັດໂຕ໊ະກົ໊ບກັ໊ບ ໃຊ້ຢາງລຶບ ລຶບຄຳຜິດ

ໄຂຝາໂຕ໊ະອີກເພື່ອມ້ຽນຢາງລຶບ ອັດກໍ່ບລົງອີກ ໄວວາພໍປານສາຍຟ້າແມບ, ຄາວໜຶ່ງຊໍ້າໄຂອີກ ຂ້ອຍງວາກໄປເບິ່ງ ຄຶດວ່າມັນເຮັດຫຍັງ ປາກົດວ່າ ພໍຊຽນ ກາ ໄດ້ໂຕດງວ ມັນກໍມ້ຽນເຄື່ອງແຕ່ລະອັນ ໄຂໂຕ໊ະ ມ້ຽນສໍດໍາ ແລ້ວອັດໂຕ໊ະ, ໄຂໂຕ໊ະ ມ້ຽນປຶ້ມ ແລ້ວອັດໂຕ໊ະ ພໍຊິຊຽນ ກິ ເຊິ່ງເປັນຄວາມຕໍ່ມາ ມັນກະຕັ້ງຕົ້ນໄຂໂຕ໊ະ-ອັດໂຕ໊ະໃໝ່ ຈົກເຄື່ອງອອກມາເທື່ອລະອັນ ຝາໂຕ໊ະຮຽນຂອງມັນຖືກອັດຢູ່ບໍ່ເຊົາ ຈົນຂ້ອຍຕາລາຍ ແຕ່ກໍຮ້າຍວ່າຫຍັງບໍ່ໄດ້ ເພາະເບິ່ງ ມັນກໍມີວຽກເພື່ອໄຂເພື່ອອັດຝາໂຕ໊ະທຸກເທື່ອ.

ສາວນາງຄູພັບຕາວັບໆຖີ່ຂຶ້ນ ຄືກັບພວມເຫັນພາບເຫດການເຫລົ່ານັ້ນ.

ຟັງມາຮອດຕອນນີ້ ແມ່ຈຶ່ງຮູ້ວ່າ ເປັນຫຍັງ *ໂຕ໊ະໂຕະຈັງ* ຈຶ່ງໄຂແລະອັດຝາໂຕ໊ະເລື້ອຍແທ້. ມື້ທໍາອິດທີ່ກັບມາແຕ່ ໂຮງຮຽນ *ໂຕ໊ະໂຕະຈັງ*ເລົ່າສູ່ແມ່ຟັງຢ່າງຕື່ນເຕັ້ນວ່າ :

- ໂຮງຮຽນນີ້ດີກາຂະໜາດເລີຍລະ ແມ່ເອີຍ,ໂຕ໊ະຢູ່ເຮືອນເຮົາຕ້ອງດຶງລີ້ນຊັກແບບນີ້ ແມ່ນບໍ່ແມ່? ແຕ່ໂຕ໊ະຢູ່ໂຮງຮຽນມີຝາຢູ່ເທິງຄືຝາອັດກະໂລ່ງຂີ້ເຫຍື້ອ ແຕ່ພຽງດີກວ່າ ທັງໃສ່ເຄື່ອງໄດ້ຫລາຍແນວ ດີກແທ້ໆໄດ໋ແມ່ !

ແມ່ຄິດເຫັນ *ໂຕ໊ະໂຕະຈັງ* ໄຂ-ອັດຝາໂຕ໊ະຢູ່ຫ້ອງຮຽນຢ່າງມ່ວນມື ເພາະບໍ່ເຄີຍມີໂຕ໊ະແບບນີ້ມາກ່ອນ ແລະຄິດວ່າ ແທ້ແລ້ວ ກໍບໍ່ແມ່ນເລື່ອງຮ້າຍແຮງຫຍັງ ພໍເຊົາເທົ່າ ກໍຄົງເຊົາໄຂເຊົາອັດເອົາເອງ.

- ຂ້ອຍຊິບອກລູກຂ້ອຍຕື່ມດອກ.

- ບໍ່ແມ່ນແຕ່ທໍ່ນີ້ດອກ, ສາວຄູເວົ້າ ສຽງແຈດແຫລມ

ກວ່າເກົ່າ, ແມ່ຮູ້ສຶກວ່າໂຕເອງລີບນ້ອຍລົງອີກ ສາວຕູເດ່ໜ້າເຂົ້າມາ ເວົ້າວ່າ :

- ພໍ່ບໍ່ເຮັດສຽງໄຂ-ອັດຝາໂຕ໊ະ ມັນຊໍ້າຢືນຕະຫລອດເວລາ ຢືນເປັນຊົ່ວໂມງໆ ພຸ້ນນ່າ.

- ຢືນຢູ່ໃສເນາະ ? ແມ່ຖາມຢ່າງຕົກໃຈ.

ສາວຕູເວົ້າຊົງເຄືອງໆວ່າ :

-ຢືນຢູ່ແຄມປ່ອງຢ້ຽມຫ້ອງຮຽນພັ້ນເດ້ !

ແມ່ບໍ່ເຂົ້າໃຈຫຍັງເລີຍ ຈໍາຕ້ອງຖາມອີກວ່າ :

- ມັນໄປຢືນເຮັດຫຍັງ ຢູ່ແຄມປ່ອງຢ້ຽມ ?

- ກະໄປເອີ້ນພວກ ຈິນດັອງຍະລະບໍ່ , ສາວຕູເວົ້າແຮງຈົນເກືອບເປັນສຽງຮ້ອງ.

ເມື່ອມາສະຫລຸບເລື່ອງສາວຕູເລົ່າ ຈຶ່ງເຂົ້າໃຈວ່າ :

ຊົ່ວໂມງທໍາອິດ *ໂຕ໊ະໂຕະຈັງ* ໄຂອັດຝາໂຕ໊ະຢູ່ດົນເຕີບແລ້ວລຸກຈາກໂຕ໊ະ ໄປຢືນຢູ່ແຄມປ່ອງຢ້ຽມ ແນມເບິ່ງອອກໄປທາງນອກ. ສາວຕູຄຶດວ່າຖ້າຢືນຢູ່ມິດໆກໍບໍ່ເປັນຫຍັງ ຈຶ່ງບໍ່ເວົ້າຫຍັງ ແຕ່ບໍ່ທັນພໍເທົ່າໃດ *ໂຕ໊ະໂຕະຈັງ* ຊໍ້າຮ້ອງຂື້ນ :

- ອາວ ຈິນດັອງຍະ !

ຈະວ່າ ເປັນໂຊກດີຂອງ *ໂຕ໊ະໂຕະຈັງ* ຫລືໂຊກຮ້າຍຂອງສາວຕູກໍບໍ່ຮູ້ ທີ່ຫ້ອງຮຽນຢູ່ຊັ້ນລຸ່ມ ແລະຕິດກັບຖະໜົນ ມີພຽງຮົ້ວພຸ່ມໄມ້ເຕ້ຍກາງກັ້ນຢູ່ເທົ່ານັ້ນ ເຮັດໃຫ້ *ໂຕ໊ະໂຕະຈັງ*ເວົ້າລົມກັບຄົນກາຍທາງໄດ້ ພວກ *ຈິນດັອງຍະ* ຫລືນັກເສບຮັບຈ້າງໂຄສະນາສິນຄ້າຢູ່ຕາມຖະໜົນໄດ້ຍິນສຽງເອີ້ນ ຈຶ່ງຍ່າງມາຍັງປ່ອງຢ້ຽມຫ້ອງຮຽນ.

*ໂຕ໊ະໂຕະຈັງ* ຟ້າວບອກໝູ່ຢ່າງດີໃຈວ່າ "- ມາແລ້ວ!"

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນໍາ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ